772
12/12/18

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເລກທີ 1756 /ກທຄວ.ອຄ

ນະຄອນຫຼວງວຽງຈັນ, ວັນທີ 12 ທັນວາ 2018

ເຖິງ: - ເຈົ້າໜ້າທີ່ທະບຽນວິສາຫະກິດ, ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ
- ເຈົ້າໜ້າທີ່ທະບຽນວິສາຫະກິດ, ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ

ເລື່ອງ: ການນຳໃຊ້ "ໃບທະບຽນວິສາຫະກິດ" ຮູບແບບປັບປຸງໃໝ່

ເພື່ອສ້າງໂສມໜ້າໃໝ່ໃຫ້ແກ່ການຈັດຕັ້ງປະຕິບັດລະບົບການຂຶ້ນທະບຽນສ້າງຕັ້ງວິສາຫະກິດ ຕາມຄຳສັ່ງຂອງນາຍົກ, ເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018 ຊຶ່ງເປັນລະບົບການຂຶ້ນທະບຽນວິສາຫະກິດທີ່ເອື້ອອຳນວຍຢ່າງເຕັມສ່ວນ ແກ່ການເລີ່ມຕົ້ນທຸລະກິດຂອງຜູ້ລົງທຶນ, ກົມທະບຽນ ແລະຄຸ້ມຄອງວິສາຫະກິດ (ກະຊວງອຸດສາຫະກຳ ແລະ ການຄ້າ), ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງຂ້າງເທິງ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ນັບແຕ່ວັນທີ 1 ມັງກອນ 2019 ເປັນຕົ້ນໄປ, ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ, ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ນຳໃຊ້ໃບທະບຽນວິສາຫະກິດ ພາຍໃຕ້ເນື້ອໃນ ແລະ ຮູບແບບໃບທະບຽນປັບປຸງໃໝ່ (ຄັດຕິດມາພ້ອມນີ້);

2. ໄປພ້ອມກັບການນຳໃຊ້ "ໃບທະບຽນວິສາຫະກິດ" ຮູບແບບປັບປຸງໃໝ່ນັ້ນ, ເລກທີ ແລະ ວັນທີຂອງໃບທະບຽນວິສາຫະກິດ ຈະໄດ້ອອກຜ່ານລະບົບໂປຣແກຣມ ແບບອັດຕາໂນມັດ ພ້ອມກັບເວລາພິມໃບທະບຽນວິສາຫະກິດ ໂດຍບໍ່ຈຳເປັນຕ້ອງຈ້ຳເລກທີ ແລະ ວັນທີ ດັ່ງທີ່ເຄີຍປະຕິບັດມາອີກ ;

3. ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ, ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ປະສານກັບ :

- ຫ້ອງການຖານຂໍ້ມູນວິສາຫະກິດ ແຫ່ງຊາດ (ກົມທະບຽນ ແລະຄຸ້ມຄອງວິສາຫະກິດ) ເພື່ອອັບເດດຊອບແວຣ໌ ຂອງຕົນ ໃຫ້ສອດຄ່ອງກັບ "ໃບທະບຽນວິສາຫະກິດ" ຮູບແບບປັບປຸງໃໝ່ດັ່ງກ່າວ ;
- ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຈອງໃບທະບຽນວິສາຫະກິດ ໃໝ່ ຕາມຄວາມຕ້ອງການຕົວຈິງໃນແຕ່ລະໄລຍະ.

4. ໃບທະບຽນວິສາຫະກິດທີ່ໃຊ້ໃນປະຈຸບັນ ຫາກຍັງເຫຼືອ ແມ່ນໃຫ້ຍົກເລີກການນຳໃຊ້ນັບແຕ່ວັນທີ 1 ມັງກອນ 2019, ເວັ້ນເສຍແຕ່ມີຄວາມຈຳເປັນແທ້ໆ ແຕ່ຕ້ອງປະສານລາຍລະອຽດກັບກົມທະບຽນ ແລະຄຸ້ມຄອງວິສາຫະກິດ ກ່ອນ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ດຣ.ສົມພອງ ພຽນພິນິດ

Scanned with CamScanner